ໂຮງຮຽນເຂດເມືອງແຊນດີເອໂກ
ຫ້ອງການຜູ້ກຳກັບການແທນຫົວຫນ້າບໍລິຫານການສຶກສາ

ຂ່າວສຳຫລັບພໍ່ແມ່ ຫລື ຜູ້ປົກຄອງນັກຮຽນ ປີທີ 8 ທີ່ໄດ້ສອງແອຟ (F) ຫລື ເກີນນັ້ນ

ພາກປະຕິບັດຂອງສະພາສຶກສາ

ເມື່ອເດືອນມົກກະຈາ ວັນທີ 23, 2007 ນັ້ນ, ສະພາການສຶກສາໄດ້ອະນຸມັດໃຫ້: "ພວກນັກຮຽນປີທີ 8 ທີ່ໄດ້ຄະແນນ ສອງແອຟ (F) ຫລືເກີນກວ່ານັ້ນໃນວິຊາແກ່ນສານຕ່າງໆ (ເຊັ່ນວ່າ ພາສາອັງກິດ, ເລກ, ປວັດສາດ, ວິທະຍາສາດ)ຈະຖືກຄ້າງຫ້ອງ ເລີ້ມແຕ່ສົກຮຽນປີນີ້, 2006 – 07. ພໍ່ແມ່ມີສິດປະຕິເສດບໍ່ໃຫ້ເດັກຂອງເອົາເຈົ້າ ຢູ່ຄ້າງຫ້ອງ, ແຕ່ວ່ານັກຮຽນນັ້ນຈະຖືກສົ່ງຂຶ້ນຫ້ອງປີທີເກົ້າຢູ່ໃນໂຄງການເອົ້າແຊກຊ່ອຍຂອງໂຮງຮຽນມັທຍົມ."

ຂໍ້ອະທິບາຍກ່ຽວກັບນະໂຍບາຍໃຫມ່

ຂ້າງລຸ່ມນີ້ແມ່ນການອະທິບາຍກ່ຽວກັບນະໂຍບາຍໃຫມ່ທີ່ຈະນຳມາໃຊ້:

I. ຂໍ້ແນະນຳກ່ຽວກັບການຄ້າງຫ້ອງ – ຊັ້ນຮຽນປີທີ 8

ພວກນັກຮຽນປີທີແປດທີ່ໄດ້ຄະແນນສອງແອຟ (F) ຫລື ຫລາຍກວ່ານັ້ນ ໃນວິຊາແກ່ນສານຕ່າງໆ (ອັງກິດ, ເລກ, ປວັດສາດ, ວິທະຍາສາດ) ໃນທ້າຍສົກຮຽນປີ 2006 – 2007 ຈະຖືກຄ້າງຫ້ອງ. (ສຳຫລັບໂຮງຮຽນທີ່ຂັ້ນຊ່ວງຮຽນໄວ້ໃຫ້, ຄະແນນທີ່ເອົ້າຮຽນໃນເທີມທີນຶ່ງນັ້ນຈະນັບເອົ້າໃສ່ກັບ "ສອງແອຟ (F) ຫລື ຫລາຍກວ່າສອງແອຟ"). ພໍ່ແມ່ສາມາດແຈ້ງບອກການຕົກລົງເຫັນພ້ອມຂອງເອົາເຈົ້າຕໍ່ການຕັດສິນໃຫ້ຄ້າງຫ້ອງໃສ່ໃນໃບ "ຄ້າງຫ້ອງ/ຂຶ້ນຫ້ອງຂອງຊັ້ນ ປີທີ 8" ພ້ອມມີຂໍ້ແນະນຳໃຫ້ນັກທຸກຄົນທີ່ຄ້າງຫ້ອງນັ້ນໄປເອົ້າໂຮງຮຽນລະດູພັກຮ້ອນ.

II. ການອໍ່ທອນກ່ຽວກັບການຄ້າງຫ້ອງ

ພໍ່ແມ່ທີ່ບໍ່ເຫັນດີໃນການຕັດສິນຄ້າງຫ້ອງອາດສາມາດສົ່ງໃບອໍ່ທອນໄດ້. ການອໍ່ທອນຈະຕ້ອງໄດ້ຂຽນລົງໃສ່ໃບ "ຄ້າງຫ້ອງ/ຂຶ້ນຫ້ອງຂອງຊັ້ນປີທີ 8" ແລະ ສົ່ງໄປຫາຫົວຫນ້າຫມວດໂຮງຮຽນ ຫລື ຜູ້ຖືກມອບຫມາຍຫນ້າທີ່ ເພື່ອທຳການອະນຸມັດ.

ນັກຮຽນທຸກຄົນທີ່ບໍ່ຖືກຄ້າງຫ້ອງຍ້ອນການອໍ່ທອນຂອງພໍ່ແມ່ນັ້ນ ຈະຮຽກຮ້ອງໃຫ້ເອົ້າໂຮງຮຽນລະດູພັກຮ້ອນ. ໃນຕອນທ້າຍຂອງໂຮງຮຽນລະດູພັກຮ້ອນນັ້ນ:

- ນັກຮຽນທີ່ໄດ້ຄະແນນ ບໍ່ມີແອຟ (F) ຈະໄດ້ຂຶ້ນຫ້ອງ ປີທີ 9 ໃນໂຄງການຮຽນທຳມະດາ.
- ນັກຮຽນທີ່ໄດ້ຄະແນນ ນຶ່ງແອຟ (F) ຫລື ເກີນກວ່ານັ້ນ ຈະໄດ້ຂຶ້ນຫ້ອງມັທຍົມ ແລະ ຮຽນຢູ່ໃນໂຄງການເອົ້າແຊກຊ່ອຍ.



*ພໍ່ແມ່ຈະແຈ້ງບອກ ການຕົກລົງເຫັນພ້ອມຂອງເອົ້າເຈົ້າກ່ຽວກັບການຕັດສິນໃຫ້ຄ້າງຫ້ອງໃສ່ໃນໃບ "ຄ້າງຫ້ອງ ຫລື ຂຶ້ນຫ້ອງ".
**ພໍ່ແມ່ຈະແຈ້ງບອກການອໍ່ທອນຂອງເອົ້າເຈົ້າກ່ຽວກັບການຕັດສິນໃຫ້ຄ້າງຫ້ອງໃສ່ໃນໃບ "ຄ້າງຫ້ອງ/ຂຶ້ນຫ້ອງ".

ລາຍລະອຽດສຳຫລັບພໍ່ແມ່, ນັກຮຽນໂຮງຮຽນພາກກາງ
ຊັ້ນຮຽນປີທີ 8 ທີ່ໄດ້ ສອງແອຟ (F) ຫລື ເກີນນັ້ນ